ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທ່ານ ອ໊ອດ ພົນຊຽງດີ
# ເປັນຜູ້ອຳນວຍການໃຫຍ່ ຕລຊລ ຄົນໃໝ່




ພິທີມອບ-ຮັບໜ້າທີ່ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ (ຕລຊລ) ໄດ້ຈັດຂຶ້ນຢ່າງເປັນທາງການໃນຕອນເຊົ້າຂອງວັນທີ 18 ກໍລະກົດ 2019 ທີ່ອາຄານ ຕລຊລ ນະຄອນຫຼວງວຽງຈັນ ລະຫວ່າງ ທ່ານ ວັນຄຳ ວໍຣະວົງ ຜູ້ອຳນວຍ ການໃຫຍ່ ຕລຊລ ຄົນເກົ່າ ແລະ ທ່ານ ອ໊ອດ ພົນຊຽງດີ ຜູ້ອຳນວຍການໃຫຍ່ ຕລຊລ ຄົນໃໝ່ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ), ຜູ້ປະຈຳການ; ພ້ອມນີ້, ມີທ່ານນາງ ສາຍສະໝອນ ຈັນທະຈັກ ຫົວໜ້າສຳນັກງານ ຄຄຊ; ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ, ປະທານສະພາບໍລິຫານ ຕລຊລ, ບັນດາສະມາຊິກສະພາບໍລິຫານ ຕລຊລ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ແລະ ສະພາບເງື່ອນໄຂຈຳເປັນໃນຂົງເຂດຕະຫຼາດທຶນ ຊຶ່ງມີຫຼາຍວຽກງານທີ່ເລັ່ງທວງໃຫ້ມີການປັບປຸງກົງຈັກການຈັດຕັ້ງ ແລະ ສັບຊ້ອນຈັດວາງພະນັກງານຢູ່ແຕ່ລະຕຳແໜ່ງງານ ເພື່ອຍົກສູງປະສິດທິພາບຂອງວຽກງານໃຫ້ສູງຂຶ້ນ; ຍົກສູງໜ້າທີ່ ແລະ ຄວາມຮັບຜິດຊອບໃຫ້ແທດເໝາະກັບປະສົບການ ແລະ ຄວາມຊຳນານງານສອດຄ່ອງກັບມາດຕະຖານ-ເງື່ອນໄຂຂອງແຕ່ລະເປົ້າໝາຍ. ການປັບປຸງການຈັດຕັ້ງຂັ້ນບໍລິຫານລະດັບຂອງ ຕລຊລ ໃນຄັ້ງນີ້ ກໍ່ເປັນເທື່ອທີ 3 ນັບແຕ່ ຕລຊລ ໄດ້ຮັບການສ້າງຕັ້ງຂຶ້ນໃນ ວັນທີ 10/10/2010 ແລະ ເລີ່ມມີການຊື້-ຂາຍ ຮຸ້ນໃນວັນທີ 11/1/2011 ໂດຍແມ່ນທ່ານ ເດດພູວັງ ມູລຣັຕນ໌ ເປັນປະທານ-ຜູ້ ອຳນວຍການໃຫຍ່ຜູ້ທຳອິດ; ຈາກນັ້ນ, ກໍ່ແມ່ນທ່ານ ວັນຄຳ ວໍຣະວົງ ເປັນຜູ້ອຳນວຍການໃຫຍ່ ຕລຊລ ນັບແຕ່ປີ 2015 ເປັນຕົ້ນມາ.





ສຳລັບທ່ານ ອ໊ອດ ພົນຊຽງດີ ຜູ້ອຳນວຍການໃຫຍ່ ຕລຊລ ຄົນໃໝ່ ໄດ້ມີບົດຮຽນ ແລະ ປະສົບການໃນການປະຕິບັດໜ້າທີ່ຢູ່ທະນາຄານແຫ່ງ ສປປ ລາວ ນັບແຕ່ປີ 1989 ເປັນຕົ້ນມາ, ຊຶ່ງມີລະດັບທິດສະດີການເມືອງ ຊັ້ນສູງ, ລະດັບວິຊາສະເພາະປະຣິນຍາໂທສາຂາເສດຖະສາດຈາກມະຫາວິທະຍາໄລແຫ່ງຊາດ ປະເທດອົດສະຕຣາລີ (ANU) ແລະ ມີປະຫວັດການເຄື່ອນໄຫວໃນໄລຍະຜ່ານມາຢູ່ຫຼາຍກົມວິຊາການທີ່ສຳຄັນຢູ່ ທຫລ ໂດຍສະເພາະເຄີຍເປັນຮອງຫົວໜ້າກົມນະໂຍບາຍເງິນຕາ, ຫົວໜ້າກົມບໍລິການທະນາຄານ ແລະ ເປັນຫົວໜ້າກົມຮ່ວມມືສາກົນ ທຫລ.




ໃນໂອກາດດັ່ງກ່າວ; ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ຜູ້ປະຈຳການຄະນະກຳມະການ ຄຄຊ ໄດ້ຍ້ອງຍໍສັນລະເສີນການບໍລິຫານ ຕລຊລ ຂອງຜູ້ອຳນວຍການໃຫຍ່ ຄົນເກົ່າໃນໄລຍະຜ່ານມາ ແລະ ໄດ້ເນັ້ນໜັກໃຫ້ຜູ້ອຳນວຍການໃຫຍ່ຄົນໃໝ່ເອົາໃຈໃສ່ໃນການຄຸ້ມຄອງ ຕລຊລ ໃຫ້ມີບາດກ້າວຫັນປ່ຽນທີ່ຕັ້ງໜ້າກ່ວາເກົ່າ ໂດຍສະເພາະການປັບປຸງການເຄື່ອນໄຫວຂອງ ຕລຊລ ໃຫ້ມີປະສິດທິຜົນ, ມີບັນຍາກາດການ ຊື້-ຂາຍ ຄຶກຄັກ ແລະ ປະຕິບັດຫຼັກການຄຸ້ມຄອງບໍລິຫານທີ່ດີໃຫ້ສອດຄ່ອງກັບສາກົນ (corporate governance). ພ້ອມນີ້, ກໍ່ຄົ້ນຄ້ວາກົນໄກ ແລະວິທີການໃນການຊຸກຍູ້ໃຫ້ບໍລິສັດ ທີ່ມີເງື່ອນຄົບຖ້ວນເຂົ້າລະດົມທຶນແລະຈົດທະບຽນ ໃນ ຕລຊລ ໃຫ້ຫຼາຍຂຶ້ນ ເພື່ອເປັນຊ່ອງທາງໃນການລະດົມທຶນໃຫ້ແກ່ຫົວໜ່ວຍວິສາຫະກິດຂະຫຍາຍຖານທຸລະກິດໃຫ້ເປັນກຳລັງແຮງຊຸກຍູ້ພື້ນຖານເສດຖະກິດແຫ່ງຊາດໃຫ້ມີການພັດທະນາ ແລະ ຂະຫຍາຍຕົວຢ່າງໝັ້ນທ່ຽງ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ